ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ
NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ກອງປະຊຸມສຳມະນາປຶກສາຫາລືກ່ຽວກັບການກຳນົດແຜນແມ່ບົດ ແລະ ຮູບແບບການພັດທະນາວຽກງານ Open Banking ຂອງ ສປປ ລາວ



ໃນວັນທີ 06 ກັນຍາ 2022 ຜ່ານມານີ້, ກົມຄຸ້ມຄອງລະບົບຊຳລະສະສາງໄດ້ຈັດກອງປະຊຸມສຳມະນາ ແລະ ປຶກສາຫາລືກ່ຽວກັບການກຳນົດແຜນແມ່ບົດ ແລະ ຮູບແບບການພັດທະນາວຽກງານ Open Banking ຂອງ ສປປ ລາວ ຂຶ້ນ ໂດຍການເປັນປະທານຂອງທ່ານ ສຸລິສັກ ທຳນຸວົງ, ຫົວໜ້າກົມຄຸ້ມຄອງລະບົບຊຳລະສະສາງ, ທະນາຄານແຫ່ງ ສປປ ລາວ ແລະ ທ່ານ Byungjoo CHA, Managing Director and Executive Vice President, Financial Business Group ຈາກສະຖາບັນ Korea Financial Telecommunication and Clearing Institution (KFTC), ສ.ເກົາຫຼີ. ເຊິ່ງມີຕາງໜ້າຈາກບັນດາກົມກອງພາຍໃນ ທະນາຄານແຫ່ງ ສປປ ລາວ ແລະ ບໍລິສັດ ລາວເນເຊີນນໍ ເພເມັ້ນເນັດເວີກ ຈຳກັດ (LAPNet) ເຂົ້າຮ່ວມ.

ຈຸດປະສົງຂອງກອງປະຊຸມໄດ້ນຳສະເໜີກ່ຽວກັບ ພາບລວມລະບົບການຊຳລະຂອງ ສປປ ລາວ ແລະ ແຜນພັດທະນາ Open Banking ຂອງ ສປປ ລາວ, ຮັບຟັງບົດຮຽນກ່ຽວກັບການພັດທະນາ Open Banking ໃນລະດັບພາກພື້ນ ແລະ ສາກົນ ພ້ອມທັງຄຳແນະນຳ ແລະ ແຜນການຮ່ວມມືໃນຕໍ່ໜ້າສຳລັບການພັດທະນາວຽກງານດັ່ງກ່າວລະຫວ່າງສອງຝ່າຍ.



ຫຼັງຈາກນັ້ນ, ໃນຕອນບ່າຍຂອງວັນດຽວກັນ ຄະນະຈາກສະຖາບັນ KFTC ສ.ເກົາຫຼີ ໄດ້ເຂົ້າຢ້ຽມຂໍ່ານັບທ່ານ ນ. ວັດທະນາ ດາລາລອຍ, ຮອງຜູ້ວ່າການ ທະນາຄານແຫ່ງ ສປປ ລາວ ເພື່ອລາຍງານກ່ຽວກັບວຽກງານການພັດທະນາ Open Banking ຢູ່ ສປປ ລາວ ແລະ ຜົນການຮ່ວມມືລະຫວ່າງ ທະນາຄານແຫ່ງ ສປປ ລາວ ແລະ ສະຖາບັນ KFTC ໃນໄລຍະຜ່ານມາ. ການພັດທະນາ Open Banking ແມ່ນວຽກງານໜຶ່ງທີ່ນອນຢູ່ໃນຍຸດທະສາດການພັດທະນາລະບົບການຊໍາລະຂອງຂະແໜງການທະນາຄານ-ການເງິນ ໄລຍະ 5 ປີ (2021-2025) ຊຶ່ງໃນປີ 2021 ທີ່ຜ່ານມາ ກົມຄຸ້ມຄອງລະບົບຊໍາລະສະສາງ ໄດ້ລົງນາມໃນບົດບັນທຶກຄວາມເຂົ້າໃຈ (MOU) ວ່າດ້ວຍການພັດທະນາວຽກງານ Open Banking ລະຫວ່າງ ຄລຊ, ທຫລ ກັບ ສະຖາບັນ KFTC ຊຶ່ງມີຈຸດປະສົງ ເພື່ອປຶກສາ, ຖ່າຍທອດຄວາມຮູ້, ປະສົບການ ແລະ ວິທີການຈັດຕັ້ງປະຕິບັດຕໍ່ກັບວຽກງານ Open Banking.

ຄະນະຈາກສະຖາບັນ KFTC, ສ.ເກົາຫຼີ ມີແຜນຈະເຄື່ອນໄຫວວຽກງານທີ່ ສປປ ລາວ ລະຫວ່າງ 6-7 ກັນຍາ 2022 ຊຶ່ງອີງຕາມແຜນແມ່ນຈະມີການຈັດສໍາມະນາໃຫ້ຄວາມຮູ້ ແລະ ລົງຢ້ຽມຢາມບັນດາທະນາຄານທຸລະກິດ ແລະ ຜູ້ໃຫ້ບໍລິການຊໍາລະຂອງ ສປປ ລາວ ຈໍານວນໜຶ່ງ ເພື່ອເປັນຂໍ້ມູນເບື້ອງຕົ້ນໃຫ້ແກ່ການສ້າງ Market Research ໃຫ້ແກ່ສູນຮ່ວມມືດ້ານການເງິນຂອງ ສ.ເກົາຫຼີ ປະຈໍາອາຊຽນ (Financial Cooperation Center/FCC – Mission of the Republic of Korea to ASEAN) ທີ່ມີແຜນຈະສໍາຫຼວດຂໍ້ມູນໃນການຮ່ວມມືວຽກງານພັດທະນາ Open Banking ຂອງອາຊຽນ ຕາມແຜນງານຂອງ ຄະນະຮັບຜິດຊອບວຽກສິ່ງເສີມການຮ່ວມມືດ້ານນະໂຍບາຍ ກ່ຽວກັບເຕັກໂນໂລຊີດ້ານການເງິນ ຂອງອາຊຽນ+3 (ASEAN+3 Working Group 4: Fintech).

ຂ່າວໂດຍ: ກົມຄຸ້ມຄອງລະບົບຊໍາລະສະສາງ
ພາບ: ສົມພົດ, ທິດສະບາ

ຢູ່ເມືອງລາວໃຊ້ແຕ່ເງິນກີບລາວ